ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 107 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2018

# ມະຕິ
# ຂອງ ຄະນະປະຈຳສະພາແຫ່ງຊາດ
# ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ສັນຍາ ການລົງທຶນພາຍໃຕ້ກອບການຮ່ວມມືເສດຖະກິດຮອບດ້ານ ລະຫວ່າງບັນດາປະເທດສະມາຊິກອາຊຽນ ແລະ ສາທາລະນະລັດ ອິນເດຍ

---------------------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານນາຍົກລັດຖະມົນຕີ.
- ອີງຕາມໜັງສືສະເໜີຂອງ ທ່ານນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 100/ນຍ, ລົງວັນທີ 27 ກັນຍາ 2018.
- ອີງຕາມການຕົກລົງ ຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 27 ກໍລະກົດ 2018.

## ຄະນະປະຈຳສະພາແຫ່ງຊາດຕົກລົງ:

ມາດຕາ 1 ເຫັນດີໃຫ້ສັດຕະຍາບັນແກ່ ສັນຍາການລົງທຶນ ພາຍໃຕ້ກອບການຮ່ວມມືເສດຖະກິດຮອບດ້ານ ລະຫວ່າງ ບັນດາປະເທດອາຊຽນ ແລະ ສາທາລະນະລັດ ອິນເດຍ ຕາມການສະເໜີຂອງ ທ່ານນາຍົກລັດຖະມົນຕີແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານ

ປານີ ຢາທໍ່ຕູ້